ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະປະຈຳພັກແຂວງວຽງຈັນ

ເລກທີ 08/ ຄປພ ວຈ.
ວັນທີ 19 ມິຖຸນາ 2024

**ຄຳແນະນຳ**

**ກ່ຽວກັບ ການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ 04/ກມສພ,**

**ລົງວັນທີ 11 ເມສາ 2024 ວ່າດ້ວຍ ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່.**

**ເຖິງ: ເລຂາພັກເມືອງ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ ບັນດາພະແນກການ, ອົງການ, ກົມກອງ, ລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ ໃນທົ່ວແຂວງວຽງຈັນ.**

- ອີງຕາມ ຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 700/ຄອ, ສພ ລົງວັນທີ 10 ພຶດສະພາ 2024 ກ່ຽວກັບ ການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ ວ່າດ້ວຍ ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່.
- ອີງຕາມ ມະຕິຕົກລົງ ຂອງຄະນະປະຈຳພັກແຂວງວຽງຈັນ ສະບັບເລກທີ 059/ຄປພ ວຈ, ລົງວັນທີ 1 ມີນາ 2023 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ.

ເພື່ອເປັນບ່ອນອີງໃຫ້ການເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ 04 ຂອງກົມການເມືອງສູນກາງພັກ ວ່າດ້ວຍ ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ໃຫ້ແກ່ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ, ຊັ້ນຄົນຕ່າງໆ ໃຫ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ, ຄະນະປະຈຳພັກແຂວງ ອອກຄຳແນະນຳບາງບັນຫາ ດັ່ງນີ້:

**I. ຈຸດປະສົງ-ລະດັບຄາດໝາຍ.**

1. ເພື່ອເຮັດໃຫ້ຄະນະພັກແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ, ຊັ້ນຄົນຕ່າງໆ ຮັບຮູ້-ເຂົ້າໃຈ, ເຊື່ອມຊຶມ ແລະ ກຳແໜ້ນ ຢ່າງເລິກເຊິ່ງ ກ່ຽວກັບການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ແລະ ຄວາມເປັນເຈົ້າໃນການປະຕິບັດພັນທະ, ໜ້າທີ່ ຂອງແຕ່ລະພາກສ່ວນຢ່າງທົ່ວເຖິງ.

2. ເພື່ອເປັນການສ້າງບາດກ້າວບຸກທະລຸໃນການພັດທະນາ, ຮັບປະກັນໃຫ້ແກ່ການເຕີບໂຕ ທາງດ້ານເສດຖະກິດດ້ວຍຈັງຫວະທີ່ໝັ້ນທ່ຽງ ແລະ ຕໍ່ເນື່ອງ ຮັບປະກັນການພັດທະນາແບບຍືນຍົງ ຕາມທິດສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ເຊິ່ງຈະເປັນເງື່ອນໄຂພື້ນຖານຮັບປະກັນການ



ສະແກນດ້ວຍ CamScanner

ແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ ກໍຄື ການພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ປະເທດເຮົາໃຫ້ນັບມື້ເປັນຮູບປະທຳຍິ່ງຂຶ້ນ ດ້ວຍຈິດໃຈບຸກທະລຸ ຍົກສູງຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນ ສ້າງຄວາມຢູ່ດີກິນດີ ໃຫ້ປະຊາຊົນ ພາຍໃນຊາດ ເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມໝັ້ນຄົງຢ່າງໜັກແໜ້ນ.

3. ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວນັ້ນ ເພື່ອແນໃສ່ການແກ້ໄຂບັນຫາຕົວຈິງຂອງພັກ, ຂອງຊາດເວົ້າລວມ, ເວົ້າສະເພາະແມ່ນບັນຫາພາຍໃນຄະນະພັກ, ອົງການປົກຄອງແຂວງວຽງຈັນ, ບັນດາເມືອງ; ພະແນກການພາຍໃນແຂວງວຽງຈັນ ໃຫ້ມີການຫັນປ່ຽນຢ່າງຈະແຈ້ງ ແຂງແຮງກວ່າເກົ່າ, ເພື່ອສ້າງຄວາມເຊື່ອໝັ້ນຢ່າງໜັກແໜ້ນ ຕໍ່ການນຳພາ ຂອງອົງຄະນະພັກແຂວງ, ການຄຸ້ມຄອງ-ບໍລິຫານຂອງອົງການປົກຄອງແຂວງ ໃນການສືບຕໍ່ນຳພາສ້າງສາພັດທະນາແຂວງວຽງຈັນໃຫ້ມີການພັດທະນາຢ່າງຮອບດ້ານຕາມທິດເພິ່ງຕົນເອງ ເປັນເຈົ້າຕົນເອງ ເທື່ອລະກ້າວ.

**II. ເນື້ອໃນ ແລະ ວິທີການເຊື່ອມຊຶມ, ຜັນຂະຫຍາຍ.**

**1. ເນື້ອໃນເຊື່ອມຊຶມ, ຜັນຂະຫຍາຍ.**

ເນື້ອໃນເຊື່ອມຊຶມ ແລະ ຜັນຂະຫຍາຍແມ່ນເນື້ອໃນມະຕິ ຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມ ສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່. ແຕ່ໃນນີ້ຕ້ອງຄັດຈ້ອນເອົາເນື້ອໃນ ຂອງມະຕິ ມາອະທິບາຍ, ຊີ້ແຈງ ຢ່າງເລິກເຊິ່ງ ເປັນຕົ້ນແມ່ນ:

①. ແນວຄິດຊີ້ນຳການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ.

②. ທິດທາງລວມ.

③. ແຜນການປັບປຸງໃນຕໍ່ໜ້າ (ແຜນນະໂຍບາຍລວມ).

**2. ການເຊື່ອມຊຶມໃຊ້ເວລາ ໜຶ່ງວັນ ຫຼື ໜຶ່ງຕອນດັ່ງນີ້.**

①. ຂັ້ນແຂວງ ຈັດຕັ້ງເຊື່ອມຊຶມໃຫ້ການນຳຫຼັກແຫຼ່ງ: ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະບໍລິຫານງານພັກແຂວງ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກບັນດາພະແນກການ, ອົງການ, ກົມກອງ ພາຍໃນແຂວງ ແລະ ເລຂາພັກເມືອງ ໂດຍແມ່ນສະຫາຍເລຂາຄະນະບໍລິຫານງານພັກແຂວງ ເປັນຜູ້ຮັບຜິດຊອບໂດຍກົງ.

②. ຂັ້ນພະແນກການ, ອົງການ, ກົມກອງພາຍໃນແຂວງ.

ຈັດຕັ້ງເຊື່ອມຊຶມໃຫ້ຮອງເລຂາ ຄະນະພັກຮາກຖານ, ຮອງເລຂາໜ່ວຍພັກ, ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ຢູ່ບັນດາພະແນກການ, ອົງການ, ກົມກອງ ພາຍໃນແຂວງ ໂດຍແມ່ນສະຫາຍ ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ ເປັນຜູ້ຮັບຜິດຊອບໂດຍກົງ.

③. ຂັ້ນເມືອງ.

ຈັດຕັ້ງເຊື່ອມຊຶມໃຫ້ການນຳຫຼັກແຫຼ່ງ: ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຄະນະບໍລິຫານງານພັກເມືອງ, ເລຂາຄະນະພັກຮາກຖານ, ເລຂາຄະນະໜ່ວຍພັກ, ສະມາຊິດພັກ, ພະນັກງານຫຼັກແຫຼ່ງ ບັນດາຫ້ອງການ ແລະ ເລຂາພັກບ້ານ ພາຍໃນເມືອງ ໂດຍແມ່ນສະຫາຍເລຂາພັກເມືອງ ເປັນຜູ້ຮັບຜິດຊອບໂດຍກົງ.

ສະແກນດ້ວຍ CamScanner

### III. ວິທີການຈັດຕັ້ງປະຕິບັດ.

1. ຄະນະພັກແຂວງ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ, ເລຂາພັກເມືອງ ເປັນເຈົ້າການນໍາພາ-ຊີ້ນໍາໂດຍກົງ ການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ແລະ ກໍາແໜ້ນ ມະຕິສະບັບນີ້ ໃຫ້ເລິກເຊິ່ງ, ທົ່ວເຖິງ ແລະ ຮັບປະກັນທຸກເປົ້າໝາຍ; ຕັ້ງໜ້າຜັນຂະຫຍາຍໃຫ້ເປັນລະອຽດ, ເຂົ້າສູ່ຂະບວນວຽກງານຕົວຈິງ ແລະ ເປັນຮູບປະທໍາໂດຍໄວ.

2. ໃຫ້ຄະນະໂຄສະນາອົບຮົມແຂວງ ແລະ ເມືອງ ຫຼື ພາກສ່ວນກ່ຽວຂ້ອງ ທີ່ເປັນເສນາທິການໃຫ້ຄະນະພັກ ຂັ້ນຕົນ ເປັນເຈົ້າການນໍາເອົາບັນດາເນື້ອໃນຈິດໃຈສໍາຄັນ ຂອງມະຕິສະບັບນີ້ ທີ່ຄະນະໂຄສະນາອົບຮົມສູນກາງພັກ ແນະນໍານັ້ນ ໄປຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ, ຊັ້ນຄົນຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຮັບຮູ້, ເຂົ້າໃຈ ຢ່າງທົ່ວເຖິງ ແລະ ເຂົ້າຮ່ວມປະຕິບັດໃຫ້ເປັນຂະບວນການກວ້າງຂວາງ.

3. ພາຍຫຼັງເຊື່ອມຊຶມແລ້ວມອບໃຫ້ສະຫາຍເລຂາພັກເມືອງ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກບັນດາພະແນກການ ສືບຕໍ່ນໍາພາ-ຊີ້ນໍາບັນດາວຽກງານຕ່າງໆທີ່ຈໍາເປັນ, ຮີບດ່ວນ ຕາມຄວາມຮັບຜິດຊອບຂອງຕົນ ຊີ້ນໍາອົງການລັດໃນຄວາມຮັບຜິດຊອບຂອງຕົນ ໃຫ້ປະຕິບັດຄື:

- ໃຫ້ບັນດາພະແນກການອ້ອມຂ້າງແຂວງ, ເມືອງ ຄົ້ນຄວ້າຂຽນອອກເປັນແຜນການ ໃນການຈັດຕັ້ງຜັນຂະຫຍາຍ ຕາມສິດພາລະບົດບາດພະແນກການຕົນ ແລະ ທິດຊີ້ນໍາ ຫຼື ນະໂຍບາຍຂອງກະຊວງສາຍຕັ້ງ, ຕາມຈຸດພິເສດ ທ່າແຮງຂອງແຕ່ລະເມືອງ.
- ໃຫ້ຖືເອົາແຜນຜັນຂະຫຍາຍ ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ຂອງພະແນກການ, ຂອງເມືອງເປັນເນື້ອໃນໜຶ່ງສອດທ້ອຍ ເຊື່ອມສານເຂົ້າໃນເນື້ອໃນກອງປະຊຸມໃຫຍ່ຂອງຕົນ ໝາຍຄວາມວ່າໃຫ້ເປັນແຜນອັນດຽວກັນ.
- ໃຫ້ເພີ່ມທະວີຄວາມເປັນເຈົ້າການນໍາພາຈັດຕັ້ງປະຕິບັດແຜນດັ່ງກ່າວໃຫ້ໄດ້ຮັບໝາກຜົນ.

4. ພາຍຫຼັງສໍາເລັດການຈັດຕັ້ງເຜີຍແຜ່, ເຊື່ອມຊຶມແລ້ວ ໃຫ້ລາຍງານໄປຍັງຄະນະໂຄສະນາອົບຮົມແຂວງ ຮັບຊາບ ( ເບີວັອດແອັບ 020 5414 4423, ຊ້າສຸດບໍ່ໃຫ້ກາຍວັນທີ 15 ກໍລະກົດ 2024 ) ເພື່ອລາຍງານຕໍ່ຂັ້ນເທິງຕາມລໍາດັບ.

ດັ່ງນັ້ນ, ຈຶ່ງແນະນໍາມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ຄະນະປະຈໍາພັກແຂວງ**

ຄໍາພັນ ສິດທິດໍາພາ

ສະແກນດ້ວຍ CamScanner